# ຫຼັກສູດ ສຳລັບອົບຮົມ ອາສາສະໝັກ ໄວໜຸ່ມ "ເພື່ອນຊ່ວຍເພື່ອນ"

ສະມາຄົມສົ່ງເສີມສຸຂະພາບຄອບຄົວ, 2016

# ບົດທີ 3 (35 ນາທີ)

# ບົດບາດ ຍິງ-ຊາຍ

# ຄວາມແຕກຕ່າງ

| ເພດ | ບົດບາດທາງເພດ |
|---|---|
| ເພດຍິງ<br>ເພດຊາຍ | ບົດບາດຂອງເພດຍິງ<br>ບົດບາດຂອງເພດຊາຍ |
| ທຳມະຊາດສ້າງມາ | ສັງຄົມກຳນົດໃຫ້ |
| ບໍ່ສາມາດປ່ຽນແປງໄດ້ | ປ່ຽນແປງ ຫຼື ປັບປ່ຽນໄດ້ |
| ບໍ່ເທົ່າທຽມກັນ | ເທົ່າທຽມກັນ |
| ຈຳແນກໄດ້ງ່າຍ | ເຊື່ອມສານກັນໄດ້ |
| ບໍ່ສາມາດປ່ຽນແທນໄດ້ | ສາມາດປ່ຽນແທນກັນໄດ້ |

# ບົດບາດ ຍິງ-ຊາຍ ແມ່ນ ສັງຄົມ ກໍານົດຂຶ້ນ

- ບົດບາດ ຍິງ-ຊາຍແມ່ນ ຮີດຄອງ, ປະເພນີ, ວັດທະນະທໍາ, ຄອບຄົວ, ສັງຄົມ ຂອງທ້ອງຖິ່ນນັ້ນ ບ່ອນນັ້ນ ໄດ້ກໍານົດມາ ແລະ ເຊື່ອຖື ປະຕິບັດ ສືບຕໍ່ກັນມາ ຈົນກາຍມາເປັນບົດບາດ ແລະ ຄວາມ ຮັບຜິດຊອບຂອງເພດຊາຍ ຂອງເພດຍິງ
- ເວົ້າລວມແລ້ວ ແມ່ນ ສັງຄົມນັ້ນໆ ທີ່ບົ່ງບອກວ່າ ນີ້ແມ່ນບົດບາດ, ໜ້າທີ່, ກິດຈະກໍາ, ຄວາມຮັບຜິດຊອບ ຂອງຜູ້ຊາຍ ຫຼື ຂອງແມ່ຍິງ ແລະ ມັນຍັງມີຄວາມແຕກຕ່າງໃນແຕ່ລະ ໄວອາຍຸອີກດ້ວຍ.
- ບົດບາດຍິງ-ຊາຍ ມີຄວາມ<u>ແຕກຕ່າງກັນ </u>ຢູ່ໃນແຕ່ລະແຫ່ງຫົນໃນ ໂລກນີ້
- ບົດບາດຍິງ-ຊາຍ <u>ສາມາດປ່ຽນແປງ</u>, ແຕ່ກົງກັນຂ້າມ ເພດຍິງ ແລະ ເພດ ຊາຍ ບໍ່ສາມາດປ່ຽນແປງໄດ້ ເພາະມັນເປັນມາຕາມທໍາມະຊາດ ຫຼື ຕັ້ງແຕ່ ເກີດແລ້ວ

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

# ບົດບາດຍິງ-ຊາຍ ມີຄວາມສຳຄັນຕໍ່ ກັບ ສຸຂະພາບທາງເພດ

- ບົດບາດ ຂອງຄົນທຸກເພດໃນສັງຄົມ ຕ້ອງເທົ່າທຽມກັນ, ບໍ່ເອົາປຽບເພດໃດ ເພດໜຶ່ງ
- ໃນສັງຄົມປັດຈຸບັນ ສະເພາະໃນບັນດາປະເທດທີ່ກຳລັງພັດທະນາ ແລະ ໃນທ້ອງຖິ່ນທີ່ຫ່າງໄກຄວາມຈະເລີນ ຄວາມເຊື່ອ, ຮີດຄອງປະເພນີ ແລະ ວັດທະນະທຳ ຍັງຈຳກັດ ບົດບາດຂອງເພດຍິງ
- ເພດຍິງຈຶ່ງ ຖືກເອົາລັດເອົາປຽບ ທຸກດ້ານ ໂດຍສະເພາະດ້ານເພດສຳພັນ ແລະ ຮ້າຍແຮງແມ່ນເມື່ອເວລາທີ່ຍັງເປັນເດັກຍິງ
- ບົດບາດທາງເພດຍິງ-ຊາຍ ສາມາດປ່ຽນແປງໄດ້ ຖ້າວ່າເຂົາເຈົ້າເຂົ້າໃຈ ແລະ ເຫັນດີນຳກັນວ່າ ສິ່ງທີ່ເຂົາເຈົ້າພົວພັນກັນ, ປະຕິບັດຮ່ວມກັນ ຫຼື ມີກິດຈະກຳນຳກັນ ນັ້ນຫາກບໍ່ມີຄວາມຍຸຕິທຳຕໍ່ຝ່າຍໃດຝ່າຍໜຶ່ງ

# ບົດບາດຂອງແມ່ຍິງ ລວມທັງເດັກຍິງ ຄວນໄດ້ຮັບການປັບປຸງ ຫຼື ປ່ຽນແປງ

- ແມ່ຍິງ ຄວນມີສິດທິ ໃນການຕັດສິນໃຈ ດ້ານການມີເພດສຳພັນ ຂອງຕົນເອງ, ການແຕ່ງງານ ແລະ ການຖືພາ.
- ແມ່ຍິງ ແລະ ຜູ້ຊາຍ ຄວນມີການພົວພັນທີ່ເທົ່າທຽມກັນ ແລະ ນັບຖືເຊິ່ງກັນແລະກັນ
- ແມ່ຍິງ ແລະ ຜູ້ຊາຍ ແມ່ນມີສິດທິເທົ່າທຽມກັນ ໃນການໄດ້ຮັບຂໍ້ມູນ ຂ່າວສານ ດ້ານສຸຂະພາບທາງເພດ ແລະ ການຈະເລີນພັນ
- ຄວາມສຸກທາງເພດ ແມ່ນ ຈະມີຂຶ້ນໄດ້ ກໍຕໍ່ເມື່ອ ຄູ່ຮ່ວມເພດທັງສອງ ມີຄວາມພໍໃຈທາງດ້ານຮ່າງກາຍ ແລະ ຈິດໃຈ ລວມທັງມີຄວາມໝັ້ນໃຈ ໃນຄວາມປອດໄພ